# ການປູກຫວາຍເພື່ອເອົາຍອດ



ຂະບວນການປູກຫວາຍ ເພື່ອເອົາຍອດ ແມ່ນໄດ້ມີການເລີ່ມຂຶ້ນໃນ ຊຸມປີ 1990 ເຊິ່ງໂດຍສ່ວນໃຫຍ່ ແມ່ນເປັນສວນປູກຂອງປະຊາ ຊົນ ແລະ ສ່ວນໜຶ່ງ ແມ່ນ ຂອງໂຄງການ ແຕ່ການປູກ ແມ່ນໄດ້ ມີ ການຂະຫຍາຍຕົວແຕ່ຢູ່ໃນພາກກາງໂດຍສະເພາະ ແມ່ນ ນະຄອນ ຫຼວງວຽງຈັນ, ຫວາຍແຍ້ ແມ່ນໜຶ່ງໃນຫຼາຍຊະນິດພັນຫວາຍ ທີ່ມີ ຜົນປະໂຫຍດ ນອກຈາກການນຳໃຊ້ລຳ ເຮັດເຄື່ອງເຟີນີເຈີ ແລະ ເຄື່ອງຮັບໃຊ້ຕ່າງໆໃນຄົວເຮືອນແລ້ວ ພາກສ່ວນຍອດ ແມ່ນຍັງສາ ມາດນຳມາເປັນທີ່ນິຍົມເຮັດອາຫານ,ສຳລັບການປູກ ຫວາຍແຍ້ໃນ ເຂດພາກເໜືອແມ່ນຍັງບໍ່ທັນໄດ້ມີການຂະຫຍາຍຕົວ ເຊິ່ງສ່ວນ ໃຫຍ່ແມ່ນນຳໃຊ້ຫວາຍໃນປ່າທຳມະຊາດ. ເຖິງຢ່າງໃດກໍ່ຕາມການ ປູກຫວາຍແມ່ນສາມາດປູກໄດ້ຊຶ່ງມີລາຍລະອຽດຕໍ່ໄປນີ້:

## ຂັ້ນຕອນທາງດ້ານເຕັກນິກວິທີການ



### 1. ໄລຍະຫ່າງການປູກ

ໄລຍະຫ່າງຂອງການປູກແມ່ນ 2x3 ແມັດ ແລະ ສຳລັບ ພື້ນທີ່ ທີ່ຈະທຳການປູກຫວາຍ ແມ່ນຕ້ອງຢູ່ໄກແຄມນ້ຳ ແລະ ສາມາດຮັບແສງສະຫວ່າງໄດ້ພຽງພໍ.

### 2. ການຂຸດຂຸມປູກ

ກ່ອນອື່ນໝົດຕ້ອງມີການອະນາໄມ້ພື້ນທີ່ ໂດຍຖາງໄມ້, ຈຸດເຜົາເສດໄມ້ ອອກໃຫ້ໝົດ. ຂຸມປູກທີ່ເໝາະສົມ ແມ່ນຂຸດໃຫ້ໄດ້ຂະໜາດ ປະມານ 20x20 ຊັງຕີແມັດ

### 3. ການປູກ

ພາຍຫຼັງທີ່ກະກຽມເບ້ຍຫວາຍ ໂດຍການຂົນສົ່ງມາຍັງ ສວນປູກແລ້ວ ຊຶ່ງເບ້ຍຫວາຍຕ້ອງມີຄວາມສູງປະມານ 30 ຊັງຕີແມັດ ແລະ ຕ້ອງເປັນເບ້ຍທີ່ມີຄວາມແຂງແຮງດີ. ກ່ອນອື່ນໝົດ ແມ່ນໃຊ້ມີດປາດເບົ້າທີ່ເປັນພັດສະຕິກອອກ ແລ້ວນຳລົງປູກໃນຂຸມທີ່ໄດ້ກະກຽມໄວ້ແລ້ວ ຢຽບໃຫ້ແໜ້ນ,

### 4. ການບົວລະບັດຮັກສາ

ພາຍໃນໄລຍະປີທຳອິດ ສ່ວນຫຼາຍ ແມ່ນສາມາດປູກພືດກະສິກຳສັບຫວ່າງໄດ້ເຊັ່ນ: ເຂົ້າ, ສາລີ ແລະ ອື່ນໆ ສຳລັບ ການກຳຈັດວັດສະພືດ ແມ່ນ ສາມາດເຮັດໄດ້ 2 ຄັ້ງ/ປີ ແລະ ໃສ່ຝຸ່ນຊີວະພາບ 2 ຄັ້ງ/ປີ ( ເດືອນ 6 ແລະ 12 )

## 5. ການຈະເລີນເຕີບໂຕ

ຜົນການທົດລອງປູກຫວາຍທີ່ບ້ານ ທ່າໂພ ເມືອງ ໂພນໄຊ  ແຂວງ ຫຼວງພະບາງ ແລະ ບ້ານ ມີໄຊ ເມືອງນາໝໍ້ ແຂວງ ອຸດົມໄຊ ໄດ້ຊີ້ໃຫ້ເຫັນວ່າ ຕົ້ນຫວາຍ ມີຄວາມສູງສະເລ່ຍປະມານ 1,47 ແມັດ ແລະ ຈຳນວນໜໍ່ທີ່ແຕກໃໝ່ ສະເລ່ຍ ເທົ່າກັບ 10 ໜໍ່/ສຸມ ແລະ ໃນປີທີ 3 ຫວາຍ ແມ່ນສາມາດເກັບກ່ຽວຜົນຜະລິດໄດ້.

ໂດຍ: 1. ທ. ຄຳພອນ ແສງດາລາ ສູນຄົ້ນຄ້ວາປ່າໄມ້ ໂທ:020 5499292
3. ທ. ກິແກ້ວ ສີຫາລາດ ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ ໂທ:020 5170963
4. ທ. ຈັນໄຕ ວົງພະຈັນ ພະນັກງານປະສານງານ ເມືອງ ໂພນໄຊ